ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກກະສິກຳ ແລະ ປ່າໄມ້
ກອງຄຸ້ມຄອງປ່າສະຫງວນ
CBI 006 Psl

ບົດສະຫຼຸບ 1 ປີ

ໂຄງການ ຄຸ້ມຄອງປ່າສະຫງວນ ນ້ຳລານ ເມືອງບຸນໃຕ້ ແຂວງຜົ້ງສາລີ
ປີ 2019

ໂດຍ:ກອງຄຸ້ມຄອງປ່າສະຫງວນ ປະຈຳປີ 2019.

Scanned with CamScanner

ກິດຈະກຳ 2.1 ລົງເກັບກຳຂໍ້ມູນເຂດຖະກິດ-ສັງຄົມແລະວາງແຜນປັບປຸງຊີວິດການເປັນຢູ່ແບບມີສ່ວນຮ່ວມ
2.2 ສ້າງແຜນຄຸ້ມຄອງປ່າສະຫງວນ
2.3 ໂຄສະນາ ເຜີຍແຜ່ ແລະ ປຸກຈິດສຳນຶກ
2.4 ພິມແຜນການ ແລະ ສິ່ງພິມ
2.5 ແຕ່ງຕັ້ງອາສາສະໝັກປ່າໄມ້ຂັ້ນບ້ານ
2.6 ສ້າງຈຸດກວດກາ
2.7 ສ້າງປ້າຍປ່າສະຫງວນ
2.8 ລົງເກັບກຳຂໍ້ມູນຈາກກອງຖ່າຍສຳຫຼວດສັດປ່າ
2.9 ກວດກາລາດຕະເວນ
2.10 ຄຸ້ມຄອງຈັດສັນທີ່ດິນປ່າໄມ້
2.11 ສ້າງຕັ້ງກອງທຶນອະນຸລັກບ້ານ
2.12 ສະໜັບສະໜຸນກອງທຶນບ້ານ
2.13 ລົງປ່ອຍກອງທຶນອະນຸລັກບ້ານ

ອົງປະກອບ 3. ການບໍລິຫານ ແລະ ຄຸ້ມຄອງໂຄງການ

ກິດຈະກຳ 3.1 ຈັດພິມ ແລະ ສຳເນົາຕ່າງໆ ຂອງກອງປະຊຸມ
3.2 ຊື້ ລິດຈັກ
3.3 ຄອມພິວເຕີ (Note book)
3.4 ກ້ອງຖ່າຍຮູບ
3.5 ກ້ອງ ວີດີໂອ
3.6 ໂທລະສັບ + ແຟັກ
3.7 ການນຳໃຊ້ບໍລິຫານ,ສາທາລະນະ(ນ້ຳປະປາ,ໄຟຟ້າ,ໂທລະສັບ)
3.8 ອຸປະກອນຮັບໃຊ້ຫ້ອງການຕ່າງໆ
3.9 ບຳລຸງຮັກສາຫ້ອງການຂັ້ນແຂວງ
3.10 ບຳລຸງຮັກສາຫ້ອງການຂັ້ນເມືອງ

III. ຄາດຄະເນຜົນໄດ້ຮັບຂອງໂຄງການ ທີ່ວາງໄວ້ ໃນປີ 2019 ໃນບົດສະເໜີໂຄງການ

ລະຫັດກິດຈະກຳ	ລາຍການ	ຜົນໄດ້ຮັບທີ່ວາງໄວ້ (ອະທິບາຍລະອຽດ)	ບໍ່ສຳເລັດຜົນ	ໝາຍເຫດ
ອົງປະກອບ 1	**ເພື່ອສ້າງຄວາມອາດສາມາດໃນການຄຸ້ມຄອງປ່າສະຫງວນນ້ຳລານ**			
	ກິດຈະກຳ 1.1: ຝຶກອົບຮົມກ່ຽວກັບການຄຸ້ມຄອງກອງທຶນບ້ານ (ສຳລັບ ປະຊາຊົນ) ຝຶກອົບຮົມດ້ານວິຊາການ ໃນການຄຸ້ມຄອງບໍລິຫານກອງທຶນບ້ານ ໂດຍການຈັດຫາເອົາຄູຝຶກ ຜູ້ທີ່ມີປະສົບການກ່ຽວຂ້ອງລົງໄປຝຶກ ຢູ່ກັບບ້ານໃຊ້ເວລາຝຶກປະມານ 5 ວັນຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນບ້ານລະ 4 ຄົນ ໃນນັ້ນມີແມ່ຍິງ 1 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 40 ຄົນ ຍິງ 10 ຄົນ.			

Scanned with CamScanner

	ກິດຈະກຳ 1.2: ຝຶກອົບຮົມກ່ຽວກັບການປູກຝັງ (ສຳລັບປະຊາຊົນ) ຝຶກອົບຮົມດ້ານວິຊາການໃນການປູກຝັງ (ເຕັກນິກການປູກເຂົ້າ,ປູກສາລີ, ປູກມັນຕົ້ນ, ປູກພືດອື່ນໆ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງ ລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 30 ຄົນ ຍິງ 20 ຄົນ.			
	ກິດຈະກຳ 1.3: ຝຶກອົບຮົມກ່ຽວກັບການລ້ຽງສັດ (ສຳລັບປະຊາຊົນ) ຝຶກອົບຮົມດ້ານວິຊາການໃນການລ້ຽງສັດ(ເຕັກນິກການລ້ຽງງົວ, ລ້ຽງແບ້, ລ້ຽງໝູ, ລ້ຽງໄກ່, ລ້ຽງເປັດ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 30 ຄົນ ຍິງ 20 ຄົນ.			
	ກິດຈະກຳ 1.4: ໄປປະຊຸມນຳ ປກສ ການເຂົ້າຮ່ວມກອງປະຊຸມຕ່າງໆ,ການເຂົ້າຮ່ວມປຶກສາຫາລືວຽກ ງານທີ່ຈຳເປັນ, ການຂຶ້ນໄປປຶກສາຫາລືບາງວຽກງານແລະອື່ນໆ ຢູ່ຫ້ອງການ ກປສ ທີ່ວຽງຈັນ ແລະ ບ່ອນອື່ນໆ.			
	ກິດຈະກຳ 1.5: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ ກ່ອນການຈັດຕັ້ງປະຕິບັດໂຄງການ ມີຄວາມຈຳເປັນຕ້ອງໄດ້ລົງໄປຫາແຕ່ລະບ້ານເປົ້າໝາຍເພື່ອຮ່ວມປຶກສາຫາລືໃນການກະກຽມ ການດຳເນີນງານຂອງໂຄງການ ພ້ອມນີ້ກໍສ້າງໃຫ້ບ້ານຕ້ອງມີຄວາມເຂົ້າໃຈຕໍ່ທິດທາງແຜນການ ຈຸດປະສົງເປົ້າໝາຍຂອໂຄງການ ທັງນີ້ກໍເພື່ອ ຄວາມສະດວກໃນການປະສານງານ ແລະ ການດຳເນີນໂຄງການຍ່ອຍ ຢູ່ແຕ່ລະບ້ານ ເຊິ່ງການລົງໄປຫາບ້ານຈະປະກອບມີຜູ້ຕາງໜ້າຄະນະກຳ ມະການຊີ້ນຳຂັ້ນແຂວງ, ຜູ້ປະສານງານຂັ້ນເມືອງ ໂດຍມີຈຳນວນຄົນ ຈຳນວນ 5 ຄົນ ຈາກເມືອງ			

Scanned with CamScanner

	ແລະ ແຂວງ.			
	ກິດຈະກຳ 1.6: ຫັດສະນະສຶກສາແລກປ່ຽນບົດຮຽນກັບຕ່າງແຂວງ ຄະນະໂຄງການ ນຳໂດຍຄະນະພະແນກຈະເຂົ້າຮ່ວມແລກປ່ຽນບົດຮຽນກັບບັນດາແຂວງທີ່ມີໂຄງການປະເພດດຽວກັນເພື່ອຖອດຖອນບົດຮຽນການຄຸ້ມຄອງ ແລະບໍລິຫານໂຄງການເພື່ອເປັນການສ້າງຄວາມເຂັ້ມ ແຂງອີກຮູບແບບນຶ່ງ ໃຫ້ແກ່ພະນັກງານດ້ວຍການຖອດຖອນບົດຮຽນຈາກ ບ່ອນທີ່ມີປະສົບການທີ່ມີຜົນສຳເລັດ ເພື່ອມາໝຸນໃຊ້ໃນເຂດຂອງຕົນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ທີ່ຜ່ານມາໄດ້ມີການປັບປຸງ ໃຫ້ມີປະສິດທິຜົນດີຂຶ້ນ ແຂວງຜົ້ງສາລີ ເປີດກອງປະຊຸມຖອດຖອນບົດຮຽນ ສົກປີ 2018			
ອົງປະກອບ 2	**ສະໜັບສະໜຸນ ຄຸ້ມຄອງປ່າສະຫງວນ**			
	ກິດຈະກຳ 2.1: ວຽກໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ ໂຄສະນາປຸກຈິດສຳນຶກໃນລະດັບພື້ນຖານໂດຍນຳໃຊ້ເຕັກນິກຕ່າງໆ, ເຜີຍແຜ່ລະບຽບກົດໝາຍ ແລະວິທີການທີ່ດີກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດໂດຍຊຸມຊົນ ແລະ ປ່າສະຫງວນ, ນຳໃຊ້ເຄື່ອງມືປະຈັກຕາເຊັ່ນ ໂປສະເຕ, ລາຍການໂຄສະນາທາງວິທະຍຸ ກ່ຽວກັບກິດຈະກຳ ອະນຸລັກຊັບພະຍາກອນປ່າໄມ້ ແລະ ສັດນ້ຳ-ສັດປ່າ,ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ກ່ອນ ແລະ ຫຼັງການຈັດຕັ້ງປະຕິບັດ.			
	ກິດຈະກຳ 2.2: ຄຸ້ມຄອງຈັດສັນທີ່ດິນ - ລົງປຶກສາຮ່ວມປະຊາຊົນເພື່ອວາແຜນການນຳໃຊ້ທີ່ດິນພ້ອມສ້າງ ແຜນທີ່ - ຮ່ວມກຳນົດເຂດການນຳໃຊ້ດິນແຕ່ລະປະເພດ ພາຍໃນບ້ານ. - ຮ່ວມສ້າງລະບຽບການຄຸ້ມຄອງນຳໃຊ້ທີ່ດິນຂັ້ນບ້ານ.			

Scanned with CamScanner

	- ຮ່ວມສ້າງຕັ້ງຄະນະກຳມະການຮັບຜິດຊອບຂັ້ນບ້ານ. - ຮ່ວມກຳນົດເຂດຄຸ້ມຄອງປ່າໄມ້ ແລະ ຟື້ນຟູປ່າໄມ້. - ຮ່ວມຈັດສັນເຂດຄຸ້ມຄອງແລະນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ - ສ້າງ ແລະ ປັກປ້າຍຊີ້ບອກປະເພດເນື້ອທີ່ຕ່າງໆຂອງບ້ານ. - ສ້າງຕັ້ງໜ່ວຍງານຄຸ້ມຄອງອະນຸລັກຊັບພະຍາກອນປ່າໄມ້ຂັ້ນບ້ານໃນການຄຸ້ມຄອງປ່າສະໜອງນ້ຳລາບ ເພື່ອເຄື່ອນໄຫວຕິດຕາມກວດກາ ລາດຕະເວນ.			
	ກິດຈະກຳ 2.3.: ປັບປຸງຊີວິດການຢູ່ ແລະ ສ້າງກອງທຶນອະນຸລັກ - ລົງຮ່ວມເກັບກຳຂໍ້ມູນເສດຖະກິດ -ສັງຄົມ ເພື່ອວາງແຜນປັບປຸງຊີວິດ ການເປັນຢູ່ຊຸມຊົນ. - ສະໜັບສະໜຸນທຶນສ້າງເປັນກອງທຶນອະນຸລັກບ້ານ.			
	ກິດຈະກຳ 2.4: ສ້າງຈຸດກວດກາ ແລະ ການກວດກາລາດຕະເວນ - ອອກແບບ, ກຳນົດຈຸດສ້າງຈຸດກວດກາ ຮ່ວມກັບເມືອງ ແລະ ບ້ານກ່ຽວຂ້ອງ - ປະມູນການກໍ່ສ້າງ - ຕິດຕາມການກໍ່ສ້າງ - ມອບ-ຮັບຈຸດກວດກາທີ່ກໍ່ສ້າງສຳເລັດ - ປະກອບພະນັກງານເຂົ້າປະຈຳ 2 ສະຫາຍ ຕໍ່ຈຸດກວດກາ - ອອກກວດກາລາດຕະເວນເປັນປົກກະຕິ.			
ອົງປະກອບ 3 ຄຸ້ມຄອງບໍລິຫານໂຄງການ				
	ການບໍລິຫານ ແລະ ການຄຸ້ມຄອງໂຄງການ ຈະຕ້ອງໄດ້ປະຕິບັດຕາມຄູ່ມືການຈັດຕັ້ງປະຕິບັດໂຄງການ ລວມທັງການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ,ການກວດກາຕິດຕາມ ແລະ ການລາຍງານ ໂດຍໄດ້ຮັບ ການຝຶກອົບຮົມຈາກ ກປສ ແລະ ຮັບປະກັນກິດຈະກຳດັ່ງຕໍ່			

Scanned with CamScanner

	ໄປນີ້: 3.1. ສ້າງທີມຈັດຕັ້ງປະຕິບັດໂຄງການ ແລະສ້າງຄວາມເຂົ້າໃຈ ຮ່ວມກັນ ໃນທີມງານ 3.2. ຈັດຊື້ ອຸປະກອນ ໂຄງການ 3.3. ສ້າງບົດລາຍງານປະຈຳ 6 ເດືອນ ແລະ ປີ ກ່ຽວກັບຄວາມຄືບໜ້າກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ລວມທັງຕິດຊື້ວັດ ແລະ ຜົນທີ່ໄດ້ຮັບ ແລະ ການເງິນ (ລວມທັງການຈັດຊື້) ຊຶ່ງຈະໄດ້ສົ່ງໃຫ້ຫ້ອງການ ກປສ ແລະ ຂັ້ນແຜນການ 6 ເດືອນແລະ ປີ ຕໍ່ໄປ ໂດຍອີງໃສ່ແຜນລວມ. 3.4. ປະສານກັບອົງການກ່ຽວຂ້ອງອື່ນໆ ກ່ຽວກັບການຄຸ້ມຄອງໂຄງການ ໂດຍສະເພາະກັບ ກປສ.			
C3.01	ຈັດພິມ ແລະ ຈັດສົ່ງເອກະສານ	ໂຄງການຍອຍຈັດຊື້ເອງ	ສືບຕໍ່ສິ້ນປີ 2020	
C3.02	ຊື້ລົດຈັກ	ມອບໃຫ້ຫ້ອງການ ກປສ (ຈັດຊື້-ຈັດຈ້າງ)ເປັນຜູ້ຈັດຊື້ໃຫ້	ຍັງບໍ່ທັນໄປຮັບ	
C3.07	ການນຳໃຊ້ບໍລິຫານ	ໂຄງການຍອຍຈັດຊື້ເອງ	ສືບຕໍ່ສິ້ນປີ 2020	
C3.08	ອຸປະກອນຮັບໃຊ້ຫ້ອງການ			
C3.09	ບຳລຸງຮັກສາຫ້ອງການຂັ້ນແຂວງ			
C3.10	ຈັດຊື້ອຸປະກອນຮັບໃຊ້ຫ້ອງການ			

IV. ຜົນການເຄື່ອນໄຫວໄລຍະ 1 ປີ ໂຄງການທີ່ໄປ ປະຕິບັດ ຕາມຕົວຈິງ (ສິ້ນປີ 2019)

ລະຫັດກິດຈະກຳ	ລາຍການ	ຜົນສຳເລັດຕົວຈິງ (ຄິດໄລເປັນເປີເຊັ້ນ)	ບໍ່ສຳເລັດຜົນ	ໝາຍເຫດ
A	**ອົງປະກອບ 1**			
C1.02	ຕິດຕັ້ງກອງຖ່າຍ ສັດປ່າ ຢູ່ ປ່າສະຫງວນນ້ຳລານ ເມືອງ ບຸນໃຕ້	ສຳເລັດການຕິດຕັ້ງກອງຖ່າຍສັດປ່າ ຈຳນວນ 30 ໜ່ວຍ 100%	1	
C1.03	ເຂົ້າຮ່ວມກອງປະຊຸມປະຈຳປີ ນຳ ຫ້ອງການ ກປສ ທີ່ ແຂວງວຽງຈັນ		0	
C1.07	ເປີດກອງປະຊຸມປະຈຳປີ ຢູ່ ເມືອງວັງວຽງ ແຂວງວຽງຈັນ	ເຂົ້າຮ່ວມກອງປະຊຸມຢູ່ເມືອງວັງວຽງ ແຂວງວຽງຈັນ 100%	1	
B	**ອົງປະກອບ 2**			
C2.03	ໂຄສະນາເຜີຍແຜ່ປຸກຈິດສຳ	ເປີດກອງປະຊຸມຂັ້ນບ້ານ ລົງໂຄສະນາ	1	

Scanned with CamScanner

	ນຶກໃຫ້ບ້ານເປົ້າໝາຍໂຄງການ	ເຜີຍແຜ່ປຸກຈິດສຳນຶກ ລະບຽບ,ກົດໝາຍຕ່າງໆທີ່ກ່ຽວຂ້ອງ ໃຫ້ບັນດາບ້ານເປົ້າໝາຍໂຄງການຄຸ້ມຄອງປ່າສະຫງວນນ້ຳລານ ຈຳນວນ 2 ບ້ານຄື: - ບ້ານລ້ອງນາຍເກົ່າ ມີຈຳ ນວນຄົນເຂົ້າຮ່ວມທັງໝົດ 80 ທ່ານ ຍິງ 20 ທ່ານ - ບ້ານລ້ອງນາຍໃໝ່ ມີຈຳ ນວນຄົນເຂົ້າຮ່ວມທັງໝົດ 78 ທ່ານ 15 ຍິງ 100%		
C2.05	ແຕ່ງຕັ້ງໜ່ວຍງານອາສາສະໝັກຄຸ້ມຄອງປ່າໄມ້ຂັ້ນບ້ານ ຈຳນວນ 2 ບ້ານ	ຈັດກອງປະຊຸມຂັ້ນບ້ານ ເພື່ອປຶກສາ ຫາ ລື ຄັດເລືອກ ໜ່ວຍງານອາສາສະໝັກຄຸ້ມຄອງປ່າໄມ້ຂັ້ນບ້ານ ຈຳນວນ 2 ບ້ານເປົ້າໝາຍມີດັ່ງນີ້: - ບ້ານລ້ອງນາຍເກົ່າ ຄັດເລືອກໄດ້ 5 ທ່ານ - ບ້ານລ້ອງນາຍເກົ່າ ຄັດເລືອກໄດ້ 5 ທ່ານ 100%	1	
C2.07	ລົງຊຸກຍູ້ຕິດຕາມ ການລ້ຽງແບ້ຂອງຊາວບ້ານ ບ້ານລ້ອງ ນາຍເກົ່າ ແລະ ບ້ານລ້ອງ ນາຍໃໝ່		0	
C2.10	ສ້າງປ້າຍປ່າສະຫງວນນ້ຳ ລານ ພ້ອມທັງຕິດຕັ້ງປ້າຍ ຈຳນວນ 6 ປ້າຍ	ລົງຕິດປ້າຍ ຢູ່ບ້ານເປົ້າໝາຍໂຄງການ ຄຸ້ມຄອງປ່າສະຫງວນນ້ຳລານ ມີດັ່ງນີ້: 1. ບ້ານ ຈາລອງລີ ຈຳນວນ 2 ປ້າຍ 2. ບ້ານນາແຕນ ຈຳນວນ 2 ປ້າຍ 3. ບ້ານສະປາ ຈຳນວນ 2 ປ້າຍ	1	
C2.12	ສະໜັບສະໜຸນກອງທຶນ ຂັ້ນບ້ານ (ຫັນມາເປັນກອງ ທຶນລ້ຽງແບ້) ຈຳນວນ 2 ບ້ານ		0	
C	**ອົງປະກອບ 3**			
C3.07	ການນຳໃຊ້ບໍລິການ (ນ້ຳ ປະປາ, ໄຟຟ້າ, ໂທລະສັບ)	ເພື່ອຈັດຊື້ອຸປະກອນຕ່າງໆ ເພື່ອຮັບໃຊ້ວຽກງານໂຄງການຄຸ້ມຄອງປ່າສະ ຫງວນນ້ຳລານ	1	

Scanned with CamScanner

V. ຕົວຊີ້ວັດ ທີ່ກຳນົດໄວ້ໃນກອບ ຜົນໄດ້ຮັບຂອງໂຄງການ

ລ/ດ	ຕົວຊີ້ວັດ	ແຜນການ	ສຳເລັດ	ໝາຍເຫດ
1	ຕິດຕັ້ງກອງຖ່າຍ ສັດປ່າ ຢູ່ປ່າສະຫງວນນ້ຳລານ ເມືອງບຸນໃຕ້	1	1	
2	ເຂົ້າຮ່ວມກອງປະຊຸມປະຈຳປີ ນຳ ຫ້ອງການ ກປສ ທີ່ ແຂວງວຽງຈັນ	1	0	
3	ເປີດກອງປະຊຸມປະຈຳປີປະຊຸມປະຈຳປີ ຢູ່ ເມືອງວັງວຽງ ແຂວງວຽງຈັນ	1	1	
4	ໂຄສະນາເຜີຍແຜ່ປຸກຈິດສຳນຶກໃຫ້ບ້ານເປົ້າໝາຍໂຄງການ	1	1	
5	ແຕ່ງຕັ້ງໜ່ວຍງານອາສາສະໝັກຄຸ້ມຄອງປ່າໄມ້ຂັ້ນບ້ານຈຳ ນວນ 2 ບ້ານ	1	1	
6	ລົງຊຸກຍູ້ຕິດຕາມ ການລ້ຽງແບ້ຂອງຊາວບ້ານ ບ້ານລ້ອງນາຍ ເກົ່າ ແລະ ບ້ານລ້ອງນາຍໃໝ່	1	0	
7	ສ້າງປ້າຍປ່າສະຫງວນນ້ຳລານ ພ້ອມທັງຕິດຕັ້ງປ້າຍຈຳນວນ 6 ປ້າຍ	1	1	
8	ສະໜັບສະໜຸນກອງທຶນຂັ້ນບ້ານ (ຫັນມາເປັນກອງທຶນລ້ຽງ ແບ້) ຈຳນວນ 2 ບ້ານ	1	0	
9	ການນຳໃຊ້ບໍລິການ (ນ້ຳປະປາ,ໄຟຟ້າ,ໂທລະສັບ)	1	1	

VI. ສະຫຼຸບການນຳໃຊ້ງົບປະມານຂອງໂຄງການ ພາຍໃນ 2019

- ງົບປະມານທັງໝົດ 600.000.000 ກີບ
- ເງິນທີ່ໄດ້ຮັບທັງໝົດ ພາຍໃນ 1 ປີ 183.722.000 ກີບ (ໜຶ່ງຮ້ອຍແປດສິບສາມລ້ານເຈັດແສນຊາວສອງ ພັນ ກີບ)
- ກປສ ຈ່າຍໂດຍກົງ 183.722.000 ກີບ (ໜຶ່ງຮ້ອຍແປດສິບສາມລ້ານເຈັດແສນຊາວສອງພັນ ກີບ)
- ງວດ I ຈຳນວນເງິນ 36.779.000 ກີບ (ສາມສິບຫົກລ້ານເຈັດແສນເຈັດສິບເກົ້າພັນ ກີບ)
- ງວດ III ຈຳນວນເງິນ 56.431.000 ກີບ (ຫ້າສິບຫົກລ້ານສີ່ແສນສາມສິບເອັດພັນ ກີບ)
- ງວດ IV ຈຳນວນເງິນ 90.512.000 ກີບ (ເກົ້າສິບລ້ານຫ້າແສນສິບສອງພັນ ກີບ)
- ເງິນທີ່ໄດ້ສະຫຼຸບ 56.431.000 ກີບ
- ເງິນທີ່ຍັງບໍ່ໄດ້ສະຫຼຸບ 90.512.000 ກີບ
- ເງິນທີ່ຂໍຄ່ຽນໃນງວດຕໍ່ໄປ (ງວດ 1 2020) ຈຳນວນ 61.000.000 ກີບ (ຫົກສິບເອັດລ້ານ ກີບ)
- ມື້ສົ່ງບົດລາຍງານການເງິນສຸດທ້າຍ ວັນທີ 20 ມັງກອນ 2020.

VII. ບົດຮຽນທີ່ຖອດຖອນໄດ້ພາຍໃນ ປີ 2019.

+ ດ້ານດີ

- ຫ້ອງການ ກປສ ໄດ້ໂອນເງິນ ໃຫ້ໂຄງການຍ່ອຍ ເປັນແຕ່ລະງວດ ແລະ ໄດ້ຈັດຕັ້ງປະຕິບັດວຽກງານຕາມ ແຜນຂອງໂຄງການຍ່ອຍ ທີ່ໄດ້ລະບຸໄວ້ໃນແຕ່ລະງວດ .

Scanned with CamScanner

- ການສະຫຼຸບລາຍງານຂອງໂຄງການບ່ອຍ ບາງຄັ້ງການລາຍງານຂໍ້ມູນໃຫ້ຫ້ອງການ ກປສ ບັງມີການຊັກຊ້າ.

+ ຂໍ້ຄົງຄ້າງ ແລະ ວິທີການແກ້ໄຂ

- ການຄຽນເງິນ ບາງຄັ້ງກໍ່ຍັງບໍ່ຖືກຕ້ອງ ມີການປັບປຸງຄືນ ຈຶ່ງເຮັດໃຫ້ການ ປ້ອງກັນງົບປະມານ ມີການຊັກຊ້າ ແລະ ບໍ່ທ່ວງທັນກັບເວລາ.

+ ວິທີການແກ້ໄຂ

- ຈະພະຍາຍາມຄຽນເງິນໃນແຕ່ລະງວດໃຫ້ທ່ວງທັນກັບເວລາ ພ້ອມທັງປິດລາຍງານ ປະຈຳເດືອນ,ໄຕມາດ ແລະ ສິ້ນປີ.

VIII. ຂໍ້ສະເໜີ ຕໍ່ຫ້ອງການກອງທຶນ ປົກປັກຮັກສາສິ່ງແວດລ້ອມ.

- ສະເໜີໃຫ້ທາງກອງທຶນປົກປັກຮັກສາສິ່ງແວດລ້ອມ ຊ່ວຍແນະນຳໃຫ້ໂຄງການຍອຍ ຕື່ມໃນເມື່ອເອກະສານບໍ່ຖືກຕ້ອງ.

IX. ການປະເມີນໂຄງການ

ໂຄງການຄຸ້ມຄອງປ່າສະຫງວນ ນ້ຳລານ ເມືອງບຸນໃຕ້ ໂຄງການ CBI 006 Psl ໃນສິ້ນປີ 2019 ມີກິດຈະກຳ ທັງໝົດ 32 ກິດຈະກຳ ແລະ ສຳເລັດ 6 ກິດຈະກຳ ຍັງ 26 ກິດຈະກຳ ຍັງບໍ່ທັນຈັດຕັ້ງປະຕິບັດ

- 6 ກິດຈະກຳ ສຳເລັດ X 2 = 12
- 26 ກິດຈະກຳ ຍັງບໍ່ທັນໄດ້ເລີ້ມ X 0 = 0

12 X 100 / 64 = 18.75 %

X. ມີແຜນ ແຜນການຈັດຕັ້ງປະຕິບັດ ສິ້ນປີ 2020 ຄັດຕິດ

ຜົ້ງສາລີ, ວັນທີ 18 ກຸມພາ 2020

(ຜູ້ຊີ້ນຳໂຄງການ)

ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້

ໄມເພັດ ບຸບຜາ

(ຫົວໜ້າໂຄງການ)

ຫົວໜ້າກອງຄຸ້ມຄອງປ່າສະຫງວນ

ວຽງສັກ ພົມມະສິ

Scanned with CamScanner

ເອກກະສານຂັດຕິດ 1. ຕົວຊີ້ວັດຂອງໂຄງການ ໂດຍອີງໃສ່ລະດັບຄາດໝາຍຮ່ວງຕົວຊີ້ວັດເບື້ອງຕົ້ນຂອງ ກປສ

ຈຸດປະສົງຂອງ ກປສ: *ຊ່ວຍສ້າງຄວາມເຂັ້ມແຂງໃຫ້ລະບົບຂອງປະເທດ ເພື່ອຄຸ້ມຄອງປ່າສະຫງວນຂອງແຂວງ, ເພື່ອບັງຄັບໃຊ້ກົດໝາຍສັດປ່າ ແລະ ເພື່ອຈັດຕັ້ງປະຕິບັດ ລະບຽບກົດໝາຍສິ່ງແວດລ້ອມແລະສັງຄົມ.*

ຕົວຊີ້ວັດຫັນໄດ້ຮັບລະດັບຈຸດປະສົງລວມ	ສຳຄັນ	ຫົວໜ່ວຍວັດແທກ	ຂໍ້ມູນພື້ນຖານ	ຄ່າເປົ້າໝາຍສະສົມ[1]					ຄວາມຖີ່ການລາຍງານ	ແຫຼ່ງຂໍ້ມູນ/ວິ ທະ ຍາສາດ	ຜູ້ເກັບກຳຂໍ້ມູນ	ລາຍລະອຽດ (ນິຍາມຕົວຊີ້ວັດ)
				ປີ1	ປີ2	ປີ3	ປີ4	ປີ5				
ຕົວຊີ້ວັດ 1: ເຂດທີ່ຢູ່ໃນການປົກປັກຮັກສາຊີວະນາໆພັນ ທີ່ຖືກວັດແທກໂດຍຄະແນນປະສິດທິຜົນຂອງການຄຸ້ມຄອງ (ປະຈຳປີ)	☐	(60% ຂອງຄະແນນສູງສຸດ)	ປ່າສະຫງວນນ້ຳລານ	40	45	50	55	60	ປະຈຳປີ	ຄະແນນປະສິດທິຜົນຂອງການຄຸ້ມຄອງ (ເຄື່ອງມືຕິດຕາມປະສິດທິຜົນຂອງການຄຸ້ມຄອງ) ແລະຂົງເຂດທີ່ນຳໃຊ້.	ກຄປງ ຫຼື ອົງການຈັດຕັ້ງໂຄງການຍ່ອຍ	ວັດແທກດ້ວຍເຄື່ອງມືຕິດຕາມປະສິດທິຜົນຂອງການຄຸ້ມຄອງ. ການປ່ຽນແປງຂອງຄະແນນ 15% ຖືວ່າດີຂຶ້ນ.
ຕົວຊີ້ວັດ 5: ການຈັດຕັ້ງບ້ານ ທີ່ຢູ່ໃນ ແລະອ້ອມແອ້ມປ່າສະຫງວນ ທີ່ສະໜັບສະໜຸນໂດຍ ກປສ ທີ່ເຮັດຕາມເງື່ອນໄຂຂອງສັນຍາອະນຸລັກ (ສະສົມ)	☐	ຈຳນວນ 10 ບ້ານ	ທັງໝົດ=10	2	2	2	2	2	ປະຈຳປີ	ບົດລາຍງານປະຈຳປີຈາກຜູ້ຮັບຜິດຊອບໂຄງການ ທີ່ປະຕິບັດຕາມແຜນ ແລະຈ່າຍເງິນໃຫ້ການຈັດຕັ້ງບ້ານ	ກຄປງ ຫຼື ອົງການຈັດຕັ້ງໂຄງການຍ່ອຍ	ສາມາດປະຕິບັດໄດ້ຕາມເນື້ອໃນ ຖ້າຫາກປະຕິບັດຕາມ ຂະບວນການເຂົ້າຮ່ວມຂອງຊຸມຊົນ: ວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ, ສ້າງເປັນບ້ານອະນຸລັກ ໄດ້ຫຼາຍກວ່າ 50%

Scanned with CamScanner

ຕົວຊີ້ວັດຜົນໄດ້ຮັບລະດັບກອງທຶນຍ່ອຍ	ສຳຄັນ	ທິດໜ່ວຍວັດແທກ	ຂໍ້ມູນພື້ນຖານ	ຄ່າເປົ້າໝາຍສະສົມ**					ຄວາມຖີ່ການລາຍງານ	ແຫຼ່ງຂໍ້ມູນ/ວິທະຍາສາດ	ຜູ້ເກັບກຳຂໍ້ມູນ	ລາຍລະອຽດ (ນິຍາມຕົວຊີ້ວັດ)
				ປີ 1	ປີ 2	ປີ 3	ປີ 4	ປີ 5				
ກອງທຶນຍ່ອຍ ນະໂຍບາຍ: ຜົນໄດ້ຮັບ: *ປັບປຸງຄວາມສາມາດແລະການຮ່ວມງານຂອງອົງການລັດແຫ່ງຊາດແລະແຂວງ ເພື່ອອອກແບບແລະຕິດຕາມຊັບພະຍາກອນຂອງຊາດແລະເຂດແຄວ້ນ, ນະໂຍບາຍສິ່ງແວດລ້ອມແລະສັງຄົມ*												
1.1: ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ (ໃນນີ້ມີຍິງເທົ່າໃດ) ໂດຍວັດແທກຕາມຈຳນວນພະນັກງານທີ່ໄດ້ເຂົ້າໃນຊຸດຮຽນສຳເລັດ ກ່ຽວກັບພື້ນຖານຂອງການຄຸ້ມຄອງການຄ້າສັດປ່າຫຼືປ່າໄມ້	☐	ຈຳນວນບ້ານ 10 ບ້ານ ຄົນ 50 ຄົນ	ລວມ	50	50	50	50	50	ປະຈຳປີ	ບົດບັນທຶກໃນໂຄງການຍ່ອຍ	ຂຄຊປ ຫຼື ອົງການຈັດຕັ້ງໂຄງການຍ່ອຍ	ທິວເລື້ອງທີ່ພົວພັນກັບຈຸດປະສົງຂອງ ກປສ ຄຸ້ມຄອງປ່າສະຫງວນນ້ຳລານ
			ຝຶກລະດັບຊາດ	50	50	50	50	50				
			ຝຶກລະດັບຕ່າງປະເທດ	0	0	0	0	0				
			40%ແມ່ຍິງຜູ້ໄດ້ຮັບຜົນປະໂຫຍດ	20	20	20	20	20				

Scanned with CamScanner

ພາບການລົງເຄື່ອນໄຫວ ຕິດຕັ້ງກ້ອງຖ່າຍສັດໆ ຊະນິດພັນສັດປ່າ ທີ່ຫາຍາກ ແລະ ໄກ້ຈະສູນພັນ

ໃນພື້ນທີ່ເຂດ ປ່າສະຫງວນ ນ້ຳລານ ເມືອງບຸນໃຕ້





Scanned with CamScanner

ຮູບພາບ ຈັດກອງປະຊຸມ ສະຫຼຸບປະຈຳປີ ສຳລັບໂຄງການພາກເໜືອ ທີ່ໄດ້ຮັບ ທຶນຈາກ ຫ້ອງການ ກອງ
ທຶນປົກປັກຮັກສາ ສິ່ງແວດລ້ອມ ຄັ້ງວັນທີ 01 - 02 ກໍລະກົດ 2019 ທີ່ ເມືອງວັງວຽງ ແຂວງວຽງຈັນ



ພາບບັນຍາກາດຜູ້ແທນເຂົ້າຮ່ວມກອງປະຊຸມ



Scanned with CamScanner





Scanned with CamScanner

ພາບກອງປະຊຸມ ໂຄສະນາເຜີຍແຜ່ເຊື່ອມຊຶມລະບຽບກົດໝາຍ ແລະ ນິຕິກຳຕ່າງໆ ຢູ່ບ້ານ ລ້ອງນາຍເກົ່າ



ພາບຊາວບ້ານເຂົ້າຮ່ວມກອງປະຊຸມ



Scanned with CamScanner





Scanned with CamScanner

ກອງປະຊຸມ ໂຄສະນາເຜີຍແຜ່ເຊື່ອມຊຶ່ມ ລະບຽບກົດໝາຍ ແລະ ນິຕິກຳຕ່າງໆ ຢູ່ ບ້ານ ລ້ອງນາຍໃໝ່



ພາບຊາວບ້ານເຂົ້າຮ່ວມກອງປະຊຸມ



Scanned with CamScanner

ມອບ-ຮັບ ລະບຽບກົດໝາຍ, ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານການຄຸ້ມຄອງປ່າໄມ້ ຊຸ້ມຜະຍາກອນປ່າໄມ້ ໃຫ້ແກ່ບ້ານ ລ້ອງນາຍເກົ່າ ແລະ ລ້ອງນາຍໃໝ່





Scanned with CamScanner

ພາບການລົງເຄື່ອນໄຫວ ຕິດປ້າຍຊີ້ບອກປ່າສະຫງວນ ແລະ ປ້າຍຫ້າມ ຕໍ່ເຂດພື້ນທີ່ ປ່າສະຫງວນ





Scanned with CamScanner

ກອງປະຊຸມຍົກລະດັບ ຄັດເລືອກເອົາຜູ້ຕ່າງໜ້າ ອາສາສະໝັກ ດຸ້ມຄອງປ່າໄມ້ ຊຸ້ມຂະຍາຍປ່າໄມ້ຂຶ້ນບ້ານ
ຢູ່ບ້ານລ້ອງນາຍເກົ່າ ແລະ



ບ້ານ ລ້ອງນາຍໃໝ່



Scanned with CamScanner



Scanned with CamScanner